ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1579.

ກະຊວງພະລັງງານ ແລະ ບໍ່ແຮ່

ຫ້ອງການກະຊວງ

ເລກທີ............./ພບ.ຫກ

ນະຄອນຫຼວງວຽງຈັນ ວັນທີ...09 APR 2025

## ແຈ້ງເຊີນປະມູນ

**ເຖິງ :** ບັນດາຫ້າງຮ້ານ ແລະ ບໍລິສັດ ທີ່ຈຳໜ່າຍເຄື່ອງໃຊ້ຫ້ອງການ, ນ້ຳມຶກ ແລະ ອຸປະກອນໄອທີ.

**ເລື່ອງ :** ເຂົ້າແຈ້ງສະເໜີລາຄາປະມູນ ເພື່ອຈັດຊື້ເຄື່ອງຮັບໃຊ້ຫ້ອງການ ຂອງ ກະຊວງພະລັງງານ ແລະ ບໍ່ແຮ່.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ: 1180/ພບ, ລົງວັນທີ: 13 ມິຖຸນາ 2023 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະມູນຈັດຊື້-ຈັດຈ້າງ ກໍ່ສ້າງ ແລະ ສ້ອມແປງ ສະບັບເລກທີ 1709/ພບ, ລົງວັນທີ 24 ສິງຫາ 2022.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍແຈ້ງມາຍັງບັນດາຫ້າງຮ້ານ ທີ່ມີຄວາມສົນໃຈ ເຂົ້າສະເໜີລາຄາ ເພື່ອຈັດຊື້ຊອງປະມູນວຽກງານ ຈັດຊື້ເຄື່ອງໃຊ້ຫ້ອງການທົ່ວໄປ, ເຄື່ອງຮັບແຂກ, ເຄື່ອງອານາໄມ ແລະ ນ້ຳມຶກພ້ອມອຸປະກອນໄອທີ ຂອງ ກະຊວງພະລັງງານ ແລະ ບໍ່ແຮ່ ເຊິ່ງມີລາຍການດັ່ງນີ້:

ສາມາດຕິດຕໍ່ຊື້ຊອງປະມູນ ຕາມວັນ ແລະ ເວລາລັດຖະການ (ວັນຈັນ-ວັນສຸກ ເວລາ 8:30 ຫາ 16:00 ໂມງ)

- ເລີ່ມຂາຍຊອງປະມູນ ວັນທີ 09 ເມສາ 2025 ຫາວັນທີ 13 ພຶດສະພາ 2025, (ຜູ້ທີ່ມີຈຸດປະສົງເຂົ້າມາສະໜອງສິນຄ້າ ຕ້ອງໄດ້ເສຍຄ່າເອກະສານປະມູນເປັນເງິນສົດ ຈຳນວນ 3.000.000 ກີບ/ຊອງ).
- ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 14 ພຶດສະພາ 2025 ຢູ່ທີ່ ຫ້ອງການ ກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຊ້ອງໜ້າຄະນະກຳມະການຈັດການປະມູນ ແລະ ຕົວແທນຂອງບໍລິສັດ ທີ່ໄດ້ຍື່ນຊອງປະມູນ, ຖ້າສົ່ງພາຍກຳນົດເວລາ ຈະບໍ່ຮັບຜິດຈາລະນາ.
- ສຳລັບເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍໃນຊຸດຊອງການປະມູນແລ້ວ.
- ບໍລິສັດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂທີ່ກຳນົດໄວ້ໃຫ້ຄົບຖ້ວນ.

ໝາຍເຫດ: ເວລາເຂົ້າມາພົວພັນສະເໜີລາຄາໃຫ້ແຕ່ງກາຍສຸພາບ (ເພດຍິງນຸ່ງສິ້ນລາວ, ເພດຊາຍນຸ່ງໂສ້ງຂາຍາວ ແລະ ເສື້ອສຸພາບ).

ຫົວໜ້າຫ້ອງການ

ກະຊວງພະລັງງານ ແລະ ບໍ່ແຮ່

ຫ້ອງການ

ຄຳໄສ ກຸໂພຄຳ

ຕິດຕໍ່ພົວພັນ: ນາງ ຈິນຕະນາວັນ ຊາພັກດີ 020 22214822

ທ້າວ ພູວຽງ ຖາວອນ 020 54565962